# ບົດສະເໜີ ປະຈໍາປີ 2019

*ພວກເຮົາຈິ່ງຢ່າລືມຄວາມໃຈກວ້າງ!*

*ຢ່າລືມການຕ້ອນຮັບແຂກ, ເພາະດ້ວຍການເຮັດເຊັ່ນນີ້ ມີບາງຄົນກໍ່ໄດ້ຕ້ອນຮັບເທວະດາຢ່າງບໍ່ຮູ້ຕົວ (ເຮັບເຣີ 13:2)*

ບັນດານັກສະແຫວງບຸນ, ການພົບປະກັນຂອງເຢົາວະຊົນຄົນໜຸ່ມຢ່າງບໍ່ຂາດສາຍຂອງເຊິ່ງເລີ່ມຈາກໝູ່ບ້ານເທເຊ ໃນຫຼາຍສິບປີຫຼັງ ໄດ້ສືບເນື່ອງແລະຂະຫຍາຍໄປທົ່ວທຸກທະວີບ.

ໃນທຸກໆຄັ້ງທີ່ມີການພົບປະກັນ, ສິ່ງໜຶ່ງທີ່ເປັນປະສົບການທີ່ເປັນຕາຈົດຈໍາທີ່ສຸດກໍ່ແມ່ນ ຄວາມໃຈກວ້າງ, ບໍ່ວ່າຈະມາຈາກຜູ້ທີ່ເຂົ້າຮ່ວມງານເອງ ແລະ ສັດຕະບູລຸດຜູ້ທີ່ເປີດບ້ານຕ້ອນຮັບພວກເຂົາເຫຼົ່ານັ້ນ.

ໃນເດືອນສິງຫາ 2018, ອີກຄັ້ງໜຶ່ງພວກເຮົາໄດ້ເຫັນເຖິງຄວາມໃຈກວ້າງຂອງສັດຕະບູລຸດຊາວເມືອງຮ່ອງກົງ, ໃນງານພົບປະຂອງໄວໜຸ່ມຈາກຫຼາຍໆປະເທດໃນຂົງເຂດທະວີບອາຊີ ແລະ ປະເທດອື່ນໆ, ເຊິ່ງລວມເຖິງບັນດາປະເທດທີ່ຍັງຄົງມີຄວາມຂັດແຍ່ງແລະບາດແຜຈາກອະດີດທີ່ຍັງຕ້ອງການການປຽວຍາ.

ໄວໜຸ່ມຈໍານວນເຈັດຮ້ອຍກວ່າຄົນຈາກບັນດາແຂວງຕ່າງໆຂອງປະເທດຈີນແຜ່ນດິນໃຫຍ່ໄດ້ເດີນທາງເຂົ້າຮ່ວມງານ. ການມີໜ້າເຂົ້າຮ່ວມຂອງໄວໜຸ່ມຈາກຫຼາຍໆປະເທດ ແລະ ການຕ້ອນຮັບທີ່ອົບອຸ່ນຂອງບັນດາສັດຕະບູລຸດໃນຮ່ອງກົງ ໄດ້ເປັນສັນຍານແຫ່ງຄວາມຫວັງ.

ໄວໜຸ່ມຄຣິສຕຽນໃນອາຊີສ່ວນຫຼາຍແມ່ນຄົນກຸ່ມນ້ອຍໃນສັງຄົມທີ່ກໍາລັງຜ່ານຜ່າການປ່ຽນແປງທີ່ເກີດຂຶ້ນຢ່າງຊຸກໄຊ້. ພວກເຂົາພະຍາຍາມທີ່ຈະສ້າງຄວາມເຂັ້ມແຂງຈາກຄວາມເຊື່ອຄວາມສັດທາໃນອົງພຣະຄຣິສໂຕແລະຈາກການຢູ່ຮ່ວມກັນນໍາອ້າຍເອື້ອຍນ້ອງໃນພຣະຄຣິສຕະຈັກອັນດຽວກັນ.

ຈາກການຮ່ວມຊຸມນຸມຢູ່ເມືອງມາດດຣິດ, ຕະຫຼອດປີ 2019, ໃນໝູ່ບ້ານເທເຊ, ເມືອງເບລຸດ, ເມືອງເຄບ ແລະ ສະຖານທີ່ອື່ນໆ, ພວກເຮົາຈະໄດ້ໄຕ່ຕອງແລະສົນທະນາກັນໃນຫຼາຍໆດ້ານຂອງຄວາມໃຈກວ້າງຂວາງໃຫ້ລົງເລິກຂຶ້ນຕື່ມ.

ບົດສະເໜີຕໍ່ໄປນີ້ແມ່ນມີຮາກເຫງົ້າມາຈາກຄວາມເຊື່ອ; ພວກເຂົາເຊື້ອເຊີນໃຫ້ບັນດາຄຣິສຕັງທັງຫຼາຍໃຫ້ຄົ້ນຫາຮາກເຫງົ້າຂອງຄວາມໃຈກວ້າງຂວາງໃນພຣະເຈົ້າ. ເຊິ່ງນີ້ຈະນໍາພາເຮົາໄປຫາຄໍາຖາມທີ່ວ່າ ຮູບລັກພຣະເຈົ້າສໍາລັບເຮົາແມ່ນໃຜ. ພຣະອົງເຈົ້າບໍ່ເຄີຍປ່ອຍປະລະເລີຍໃຜ, ແຕ່ພຣະອົງຊົງຕ້ອນຮັບແຕ່ລະບຸກຄົນ.

ບັນດາບຣາເດີ້ ແລະ ຂ້າພະເຈົ້າເອງ ເຫັນວ່າປະສົບການແຫ່ງຄວາມໃຈກວ້າງເກີດຂຶ້ນໄດ້ ບໍ່ຈໍາກັດແຕ່ກັບຄົນຄຣິສຕຽນທີ່ມາຈາກຫຼາຍໆໂບດເທົ່ານັ້ນ, ແຕ່ຜູ້ທີ່ມີຄວາມເຊື່ອໃນສາສໜາ/ນິກາຍອື່ນໆ ຫລື ຜູ້ທີ່ບໍ່ມີຄວາມເຊື່ອກໍ່ສາມາດພົບພໍ້ຄວາມເອື້ອເຟື້ອເພື່ອແຜ່ໄດ້ເຊັ່ນກັນ.

ຢູ່ທ່າມກາງຄວາມວຸ້ນວາຍສັບສົນ, ເມື່ອຄວາມບໍ່ໄວ້ເນື້ອເຊື່ອໃຈຖືກແຜ່ກວ້າງໃນສັງຄົມ, ພວກເຮົາທັງຫຼາຍຈະມີຄວາມກ້າທີ່ຈະສະແດງຄວາມເອື້ອເຟື້ອເພື່ອແຜ່ ແລະ ເສີມສ້າງຄວາມໄວ້ເນື້ອເຊື່ອໃຈບໍ່?

ບຣາເດີ້ ອະໂລ້ຍ

*ບົດສະເໜີທີ່ໜຶ່ງ:*

# ຄົ້ນຫາທີ່ມາຂອງຄວາມໃຈກວ້າງໃນອົງພຣະເຈົ້າ

ຈາກຈຸດເລີ່ມຕົ້ນຂອງການສ້າງໂລກ, ພຣະເຈົ້າໄດ້ຊົງສ້າງຂໍ້ເລິກລັບໃນການເຮັດວຽກ. ຄວາມເຊື່ອໝັ້ນນີ້ແມ່ນໝາກຫົວໃຈຂອງເລື່ອງພຣະເຈົ້າສ້າງໂລກ ທີ່ຢູ່ໃນບົດທຳອິດໃນພຣະຄຳພີ. ພຣະອົງໄດ້ຊົງໄຕ່ຕອງວ່າຈະນຳເອົາສິ່ງໃດໃຫ້ເກີດມີຊີວິດ: ພຣະອົງເຈົ້າຊົງເຫັນວ່າຊັບພະສິ່ງທັງໝົດຄືວ່າດີແທ້. ທຸກສິ່ງຢ່າງໃນໂລກນີ້ພຣະອົງຊົງຮັກ.

ບາງຄັ້ງພວກເຮົາມີຄວາມເຂົ້າໃຈໃນອົງພຣະຜູ້ເປັນເຈົ້າໜ້ອຍຫຼາຍ, ແຕ່ພວກເຮົາສາມາດກ້າວໄປຂ້າງໜ້າດ້ວຍຄວາມໝັ້ນໃຈວ່າ ພຣະເຈົ້າຕ້ອງການຄວາມຊື່ນຊົມຍິນດີຂອງພວກເຮົາ ແລະ ພຣະອົງກໍ່ຕ້ອນຮັບເຮົາທັງຫຼາຍ ໂດຍບໍ່ມີເງື່ອນໄຂ. ພຣະອົງເຈົ້າແມ່ນທີ່ມາຂອງຄວາມເອື້ອເຟື້ອເຜື່ອແຜ່.

ນອກຈາກນີ້, ໂດຍຜ່ານອົງພຣະກຣິສໂຕ, ພຣະອົງໄດ້ໄປເຖິງຈຸດທີ່ມາບັງເກີດເປັນມະນຸດຄືພວກເຮົາທັງຫຼາຍ, ເພື່ອໃຫ້ໄດ້ຮັບສະພາວະຄວາມເປັນມະນຸດດ້ວຍຕົວຂອງພຣະອົງເອງ ແລະ ເພື່ອຕ້ອນຮັບພວກເຮົາ. ຄວາມໃຈກວ້າງຂອງພຣະອົງທີ່ມີຕໍ່ພວກເຮົາໄດ້ມາປະທັບໃນສ່ວນເລິກຂອງວິນຍານເຮົາ: ມັນປ່ຽມລົ້ນ ແລະ ເກີນຂອບເຂດຂອງຄວາມເປັນມະນຸດ.

- ການປະສົບກັບໄພອັນຕະລາຍໃນຍຸກສະໄໝຂອງພວກເຮົາ, ພວກເຮົາໄດ້ຍຶດຕິດກັບຄວາມທໍ້ແທ້ບໍ? ເພື່ອເປັນການເຮັດໃຫ້ພວກເຮົາຍັງຄົງມີຄວາມຫວັງ, ໃຫ້ພວກເຮົາຝຶກຝົນຈິດວິນຍານ, ແນມເບິ່ງຜູ້ຄົນອ້ອມຂ້າງດ້ວຍສາຍຕາອັນສຸຂຸມວ່າທຸກສິ່ງຢ່າງສາມາດເປັນທີ່ຊື່ນຊົມ.
- ໃຫ້ພວກເຮົາອ່ານພຣະຄຳພີດ້ວຍຕົວເອງຫຼືຮ່ວມກັບຜູ້ອື່ນ, ເລີ່ມຈາກພຣະວໍລະສານທີ່ບອກເຖິງເລື່ອງລາວຊີວິດຂອງພຣະເຢຊູເຈົ້າ. ພວກເຮົາອາດຈະບໍ່ເຂົ້າໃຈທຸກຖ້ອຍຄຳຫຼືທຸກໆຄວາມໝາຍໃນເວລາສັ້ນໆ; ບາງຄັ້ງເຮົາຈະຕ້ອງຊອກຮູ້ຄວາມໝາຍເພີ່ມເຕີມ. ໃຫ້ພວກເຮົາເຂົ້າຫາ ພຣະວາຈາຂອງພຣະເຈົ້າຮ່ວມກັນ ເຊິ່ງມັນປຽບເໝືອນບໍ່ນໍ້າແຫ່ງຊີວິດທີ່ຈະຊ່ວຍໃຫ້ເຮົາເຕີບໃຫຍ່ໃນຄວາມໄວ້ໃຈໃນອົງພຣະເຈົ້າ.

> *ດັ່ງນັ້ນ ລາວຈຶ່ງລຸກຂຶ້ນຄືນເມືອຫາພໍ່ຂອງຕົນ. ຂະນະທີ່ຍັງຢູ່ຫ່າງໄກຈາກບ້ານພໍ່ສົມຄວນ ພໍ່ກໍແນມເຫັນລາວແລະມີຄວາມເມດຕາສົງສານ ຈຶ່ງແລ່ນອອກໄປກອດລູກໄວ້ດ້ວຍຄວາມຮັກແພງ. (ລູກາ 15:20)*
>
> ໃນບົດເລື່ອງຂອງທ່ານນັກບຸນລູກາ 15:11-32 ນີ້ໄດ້ສອນຂ້າພະເຈົ້າເຖິງຄວາມໃຈກວ້າງຂອງພຣະເຈົ້າແນວໃດ?

*ບົດສະເໜີທີ່ສອງ:*

# ໃສ່ໃຈນໍາການປະກົດຕົວຂອງພຣະເຈົ້າໃນຊີວິດປະຈໍາວັນຂອງເຮົາ

ພຣະເຈົ້າໄດ້ປະທານຄວາມໃຈກວ້າງໃຫ້ແກ່ພວກເຮົາ, ແຕ່ມັນຂຶ້ນນໍາຄວາມອິດສະລະຂອງພວກເຮົາທີ່ຈະຕອບຮັບພຣະອົງແລະກັບມາເປັນໜຶ່ງດຽວກັບພຣະອົງ.

ພຣະເຢຊູເຈົ້າໄດ້ສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງຮັກເຮົາ, ປະທານມິດຕະພາບແກ່ເຮົາ. ພຣະເຢຊູເຈົ້າຊົງຢືນເຄາະປະຕູໜ້າບ້ານເຮົາຄືດັ່ງຄົນທຸກຈົນ, ພຣະອົງມີຄວາມຫວັງແລະລໍຄອຍຄວາມໃຈກວ້າງຂອງພວກເຮົາໃນທາງກັບກັນ. ຖ້າມີຜູ້ເປີດປະຕູ, ພຣະອົງກໍ່ຈະສະເດັດເຂົ້າໄປ.

ດ້ວຍການພາວະນາແບບລຽບງ່າຍ, ພວກເຮົາເປີດໂອກາດໃຫ້ພຣະອົງສາມາດເຂົ້າມາໃນດວງໃຈຂອງເຮົາໄດ້. ຈາກນັ້ນ, ເຖິງແມ່ນວ່າພວກເຮົາຍາກທີ່ຈະຮູ້ສຶກໄດ້ວ່າພຣະອົງສະຖິດນໍາເຮົາ, ພຣະເຢຊູເຈົ້າຈະສະເດັດມາຢູ່ທ່າມກາງເຮົາ.

- ພາວະນາຢູ່ໃນໂບດ, ເຖິງແມ່ນວ່າຈະໃຊ້ເວລາພຽງເລັກນ້ອຍ; ກໍານົດເວລາບໍ່ວ່າຈະຊ່ວງເຊົ້າຫຼືຕອນແລງ, ໂດຍປາສະຈາກຈຸດປະສົງອື່ນ ພຽງແຕ່ມອບຖວາຍກິດຈະການພາຍໃນມື້ນັ້ນໄວ້ນໍາພຣະອົງ - ສິ່ງເຫລົ່ານີ້ເປັນສິ່ງທີ່ເສີມສ້າງຈິດວິນຍານຂອງເຮົາ. ລະນຶກວ່າພຣະເຈົ້າສະຖິດນໍາເຮົາກໍສາມາດປົດປ່ອຍເຮົາຈາກຄວາມຢ້ານກົວ - ຢ້ານຜູ້ອື່ນ, ຢ້ານວ່າຈະບໍ່ດີພໍ, ກັງວົນນາຄວາມບໍ່ແນ່ນອນໃນອະນາຄົດ.
- ເມື່ອພວກເຮົາບໍ່ມີເວລາຫຼາຍ, ພວກເຮົາສາມາດລົມນໍາພຣະເຈົ້າກ່ຽວກັບຕົວເຮົາເອງແລະຜູ້ອື່ນ - ຜູ້ທີ່ຢູ່ໃກ້ແລະໄກ - ດ້ວຍຄາເວົ້າພຽງສອງສາມຄໍາ, ໂດຍການເວົ້າເບົາໆ. ພວກເຮົາສາມາດບອກພຣະອົງໄດ້ວ່າ ແມ່ນຫຍັງຢູ່ໃນໃຈເຮົາ ແລະ ແມ່ນຫຍັງທີ່ພວກເຮົາຍັງບໍ່ເຂົ້າໃຈ. ບາງຄໍາໃນພຣະຄໍາພີອາດຍັງຄົງຄ້າງໃນຫົວເຮົາຕະຫຼອດວັນ.

**ພຣະອົງເຈົ້າຊົງກ່າວວ່າ: "ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ແລະຈະຮ່ວມຮັບປະທານອາຫານກັບຜູ້ນັ້ນ ແລະຜູ້ນັ້ນຈະຮ່ວມຮັບປະທານອາຫານກັບເຮົາ" (ພຣະນິມິດ 3:20)**

*ແມ່ນຫຍັງຈະຊ່ວຍໃຫ້ຂ້າພະເຈົ້າໄດ້ຍິນສຽງພຣະອົງ?*

*"ການເປີດປະຕູ"ຕ້ອນຮັບພຣະອົງ ມີຄວາມໝາຍສໍາລັບຂ້າພະເຈົ້າແນວໃດ?*

*ບົດສະເໜີທີ່ສາມ:*

# ຕ້ອນຮັບພອນສະຫວັນຂອງເຮົາ ແລະ ຂໍ້ຈຳກັດ(ຈຸດດ້ອຍ)ຂອງຕົນເອງເຊັ່ນກັນ

ພຣະເຈົ້າຊົງຕ້ອນຮັບທຸກສິ່ງຢ່າງໃນຕົວຂອງພວກເຮົາ; ເຊັ່ນດຽວກັນ, ພວກເຮົາຄວນຍອມຮັບຕົວຕົນເຮົາດັ່ງທີ່ເຮົາເປັນ. ນັ້ນແມ່ນຈຸດເລີ່ມຕົ້ນຂອງການປຽວຢາ ເຊິ່ງມັນເປັນສິ່ງຈຳເປັນສຳລັບພວກເຮົາທຸກຄົນ.

ໃຫ້ພວກເຮົາຈົ່ງຍ້ອງຍໍສັນເສີນພຣະອົງເຈົ້າສຳລັບພອນສະຫວັນທີ່ພຣະອົງປະທານແກ່ເຮົາ. ເຊັ່ນດຽວກັນໃຫ້ພວກເຮົາຍອມຮັບຄວາມອ່ອນແອຂອງຕົນເອງເຊິ່ງມັນຈະເປັນປະຕູຜ່ານໃຫ້ພຣະອົງເຈົ້າສາມາດເຂົ້າມາປະທັບຢູ່ໃນເຮົາໄດ້. ເພື່ອເປັນການນຳທາງເຮົາໃນຂັ້ນຕໍ່ໄປ, ເພື່ອຊ່ວຍເຮົາປ່ຽນແປງຊີວິດຕົນເອງ, ອັນດັບທຳອິດພຣະເຈົ້າຕ້ອງການໃຫ້ເຮົາຍອມຮັບຄວາມເປັນໂຕຂອງເຮົາເອງສາກ່ອນ.

ການຍອມຮັບຂໍ້ຈຳກັດ(ຈຸດດ້ອຍ)ຂອງໂຕເອງຈະບໍ່ເຮັດໃຫ້ເຮົາຢູ່ເສີຍເມື່ອພົບກັບຄວາມອະຍຸດຕິທຳ, ຄວາມຮຸນແຮງ, ແລະການສະແຫວງຫາຜົນປະໂຫຍດຈາກຄົນອື່ນ. ກົງກັນຂ້າມ, ການຍອມຮັບຂໍ້ຈຳກັດຂອງຕົວເອງສາມາດເຮັດໃຫ້ເຮົາເຂັ້ມແຂງຕໍ່ກັບບັນຫາດ້ວຍຈິດໃຈແຫ່ງການໃຫ້ອະໄພ.

ອົງພຣະຈິດເຈົ້າ, ດວງໄຟທີ່ຖືກເຊື່ອງຊ້ອນເລິກໆໃນຄວາມເປັນມະນຸດຂອງເຮົາ, ຈະຊ່ວຍໃນການປ່ຽນແປງທຸກສິ່ງຢ່າງທີ່ຢູ່ໃນເຮົາແລະອ້ອມຂ້າງເຮົາເທື່ອລະນ້ອຍ ໃຫ້ກັບມາມີຊີວິດ.

- ເພື່ອໃຫ້ພວກເຮົາສາມາດຄົ້ນພົບພອນສະຫວັນ ແລະ ຍອມຮັບຂໍ້ຈຳກັດຂອງຕົນເອງ, ໃຫ້ພວກເຮົາຊອກຫາບຸກຄົນທີ່ສາມາດເຊື່ອຖືໄດ້ ຜູ້ທີ່ສາມາດຮັບຟັງເຮົາດ້ວຍຈິດໃຈທີ່ງົດງາມ, ບຸກຄົນທີ່ສາມາດຊ່ວຍເຮົາໃຫ້ເຕີບໃຫຍ່ທາງຊີວິດແລະຄວາມເຊື່ອ.
- ມັນເປັນສິ່ງທີ່ສຳຄັນທີ່ເຮົາຈະສ້າງໂອກາດໃນການສັນເສີນພຣະເຈົ້າໃນຄຳພາວະນາຂອງເຮົາ. ເຊິ່ງມັນເປັນການຮອບຮອມການເປັນຢູ່ຂອງເຮົາ. ການພາວະນາຮ່ວມກັນແມ່ນບໍ່ສາມາດເອົາສິ່ງອື່ນມາແທນທີ່ໄດ້; ແລະຈາກນັ້ນ, ມັນຈະດັງກ້ອງຢູ່ໃນໃຈຂອງເຮົາ.

**"ບັນດາຜູ້ທີ່ເຮັດການໜັກໜ່ວງແລະແບກພາລະໜັກ ຈົ່ງມາຫາເຮົາ ແລະເຮົາຈະໃຫ້ພວກເຈົ້າໄດ້ຮັບຄວາມເຊົາເມື່ອຍ. ຈົ່ງເອົາແອກຂອງເຮົາແບກໄວ້ແລ້ວຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງພວກເຈົ້າຈະໄດ້ພົບຄວາມເຊົາເມື່ອຍ. ດ້ວຍວ່າ ແອກຂອງເຮົາກໍ່ພໍເໝາະ ແລະພາລະຂອງເຮົາກໍເບົາ" (ມັດເທວ 11:28-30)**

*ພາລະໜັກ ແລະ ຄວາມເຊົາເມື່ອຍ ໃດທີ່ພຣະເຢຊູໝາຍເຖິງ?*

*ຂ້າພະເຈົ້າສາມາດຮຽນຮູ້ຫຍັງໄດ້ແດ່ຈາກຄຳສອນນີ້ຂອງພຣະອົງ?*

*ບົດສະເໜີທີ່ສີ່:*

# ຊອກຫາສະຖານທີ່ທີ່ມີມິດຕະພາບ

ເພື່ອແບ່ງປັນຄວາມໄວ້ໃຈຂອງເຮົາຕໍ່ພຣະເຈົ້າກັບບຸກຄົນອື່ນ, ພວກເຮົາຕ້ອງການບ່ອນທີ່ເຮົາສາມາດພົບພໍ້ໝູ່ເພື່ອນບໍ່ແມ່ນພຽງສອງສາມຄົນທີ່ເຮົາຮູ້ດີ, ແຕ່ແມ່ນມິດຕະພາບທີ່ກວ້າງໃຫຍ່ພຽງພໍທີ່ຈະຮອງຮັບຜູ້ຄົນທີ່ແຕກຕ່າງຈາກເຮົາ.

ໂບດແລະຊຸມຊົນເປັນສະຖານທີ່ທີ່ເຮັດໃຫ້ມີການລວມຕົວຂອງບຸກຄົນທີ່ມີຄວາມແຕກຕ່າງກັນບໍ່ວ່າຈະເປັນຊ່ວງອາຍຸ, ຈາກສັງຄົມທີ່ຫຼາກຫຼາຍ ແລະ ວັດທະນະທຳທີ່ແຕກຕ່າງ. ມັນຈະມີມິດຕະພາບທີ່ລ້ຳຄ່າຢູ່ທີ່ນັ້ນ, ເຊິ່ງບາງຄັ້ງເຮົາກໍ່ຍັງບໍ່ພົບພໍ້ ແລະ ເປັນສິ່ງທີ່ເຮົາຄວນນຳໃຊ້ມິດຕະພາບນີ້ໃຫ້ເກີດປະໂຫຍດ.

ຖ້າວ່າພຣະກຣິສຕະຈັກທ້ອງຖິ່ນເປັນຄອບຄົວທີ່ໃຈກວ້າງຍິນດີຕ້ອນຮັບແຂກ, ເປັນສະຖານທີ່ທີ່ເຮົາສາມາດເປັນໂຕຂອງໂຕເອງໄດ້, ສາມາດສົງໄສ ແລະ ຕັ້ງຄຳຖາມໄດ້, ປາສະຈາກຄວາມຢ້ານທີ່ຈະຖືກຕັດສິນ(ຕັ້ງຄຳຖາມ)...

ພຣະກຣິສຕະຈັກຖືກກໍ່ຕັ້ງຂຶ້ນໃນບ່ອນທີ່ມີລົມແຫ່ງອົງພຣະຈິດເຈົ້າເປົ່າອອກມາ, ບ່ອນທີ່ມີມິດຕະພາບຂອງອົງພຣະເຢຊູແຜ່ອອກມາຂ້າງນອກ. ໃນບາງປະເທດທີ່ຢູ່ໂຊນໃຕ້, ມັນຈະມີຊຸມຊົນຄຣິສຕຽນລະດັບຮາກຫຍ້າທີ່ໃຫ້ຄຳໝັ້ນສັນຍາທີ່ຈະຊ່ວຍເຫຼືອເພື່ອນມະນຸດຜູ້ທີ່ຢູ່ໃກ້ແລະໄກ, ເພື່ອນບ້ານ ແລະ ຄົນໃນຊຸມຊົນດຽວກັນ. ພວກເຂົາສາມາດເປັນທີ່ມາຂອງແຮງບັນດານໃຈແກ່ບັນດາປະເທດອື່ນໆໄດ້ບໍ?

- ມັນເປັນສິ່ງທີ່ດີທີ່ພົບປະກັນໃນກຸ່ມນ້ອຍໆເປັນປະຈຳສຳລັບ ພາວະນາແລະແບ່ງປັນ, ແຕ່ໃຫ້ພວກເຮົາສະໜັບສະໜູນຊີວິດກຣິສຕັງໃນກຸ່ມໃຫຍ່ໃນໂບດຫຼືຊຸມຊົນ/ໝູ່ບ້ານຂອງເຮົາເຊັ່ນກັນ. ກຸ່ມນ້ອຍໆຂອງເຮົາສາມາດເອົາຈິດໃສ່ໃຈນຳຜູ້ອື່ນໄດ້ບໍ? ຍົກຕົວຢ່າງ: ຜູ້ທີ່ມາຮ່ວມມິຊຊາໃນວັນອາທິດແຕ່ບໍ່ຮູ້ຈັກໃຜໝົດ?
- ພຣະເຢຊູເຈົ້າຕ້ອງການທີ່ຈະຮວບຮວມກຣິສຕຽນຜູ້ທີ່ຮັກແລະຕິດຕາມພຣະອົງໃຫ້ເປັນໜຶ່ງດຽວ, ໂດຍປາສະຈາກນິກາຍທີ່ເຮົານັບຖືຢູ່. ການແບ່ງປັນຄວາມໃຈກວ້າງເປັນຫົນທາງໄປສູ່ຄວາມເປັນໜຶ່ງດຽວ. ພວກເຮົາຈະບໍ່ເຊື້ອເຊີນຜູ້ທີ່ຢູ່ອ້ອມຂ້າງເຮົາທີ່ມີຄວາມເຊື່ອບໍ່ຄືເຮົາ ມາຮ່ວມພາວະນາໃຫ້ຫຼາຍກວ່າທີ່ເຮົາເຄີຍປະຕິບັດບໍ?

**ຢູ່ເທິງກາງເຂນ, ກ່ອນພຣະເຢຊູເຈົ້າຈະສິ້ນພຣະຊົນ, ພຣະອົງຫຼຽວເຫັນພຣະມານດາພ້ອມກັບສາວົກທີ່ພຣະອົງຮັກຢືນຢູ່ທີ່ນັ້ນ, ພຣະອົງໄດ້ເວົ້າກັບພຣະມານດາວ່າ: "ແມ່ເອີ້ຍ, ນີ້ແຫລະລູກຂອງແມ່" ແລ້ວພຣະອົງກໍ່ກ່າວກັບລູກສິດຄົນນັ້ນວ່າ: "ນີ້ແມ່ນແມ່ຂອງເຈົ້າ." ນັບຕັ້ງແຕ່ນັ້ນມາ ລູກສິດຄົນນີ້ກໍ່ຮັບເອົາພຣະນາງມາຣີອາໄປຢູ່ເຮືອນຂອງຕົນ. (ຢວງ19:25-27)**

*ຢູ່ຕີນກາງເຂນ, ໄດ້ມີຄອບຄົວໃໝ່ເກີດຂຶ້ນດ້ວຍພຣະປະສົງຂອງອົງພຣະເຢຊູເຈົ້າ. ໃນໂລກປະຈຸບັນ,ພວກເຮົາສາມາດດຳລົງຊີວິດຮ່ວມກັບຜູ້ອື່ນດັ່ງອ້າຍເອື້ອຍນ້ອງກັນໄດ້ແນວໃດ?*

*ບົດສະເໜີທີ່ຫ້າ:*

# ເຝິກຝົນການຕ້ອນຮັບດ້ວຍໃຈກວ້າງຂວາງ

ຄວາມໃຈກວ້າງຂອງພຣະເຈົ້າທີ່ມີຕໍ່ເຮົາແມ່ນຄຳວິງວອນ. ເຮົາສາມາດໄດ້ຮັບຈາກຜູ້ອື່ນບໍ, ແຕ່ບໍ່ແມ່ນຍ້ອນເຮົາຢາກໃຫ້ເຂົາເຮັດ, ແຕ່ມັນເປັນສິ່ງທີ່ມາຈາກຕົວເຂົາອີ່ຫຼີ. ເຮົາສາມາດເຮັດໃຫ້ໂຕເຮົາເອງໄດ້ຮັບການຕ້ອງຮັບຈາກຜູ້ອື່ນໂດຍວິທີທາງຂອງເຂົາເຈົ້າເອງ, ໂດຍບໍ່ແມ່ນວິທີທາງຂອງເຮົາໄດ້ບໍ?

- ໃຫ້ພວກເຮົາຈົ່ງເປັນຄົນທີ່ພ້ອມຈະຕ້ອນຮັບແຂກ, ໃຫ້ເວລາໃນການຮັບຟັງຜູ້ອື່ນ, ເຊື້ອເຊີນຄົນອື່ນຮ່ວມຮັບປະທານອາຫານ, ເຂົ້າຫາຄົນທຸກຈົນ, ໃຊ້ຄຳເວົ້າທີ່ມ່ວນຫູກັບຜູ້ທີ່ເຮົາພົບພໍ້.
- ໃນການພົບພໍ້ສິ່ງທ້າທາຍທີ່ບົ່ງໃຫຍ່ຂອງຜູ້ອົບພະຍົກ, ໃຫ້ພວກເຮົາຊອກຫາຫົນທາງທີ່ຈະເຮັດໃຫ້ຄວາມໃຈກວ້າງກາຍມາເປັນໂອກາດ, ບໍ່ພຽງແຕ່ເພື່ອຜູ້ທີ່ຖືກຕ້ອນຮັບ ແຕ່ເພື່ອຜູ້ທີ່ຮັບຕ້ອນເຊັ່ນກັນ. ການປະເຊີນໜ້າລະຫວ່າງບຸກຄົນເປັນສິ່ງທີ່ຂາດບໍ່ໄດ້ - ພວກເຮົາຈຳຕ້ອງໄດ້ຮັບຟັງ, ຍົກຕົວຢ່າງ,ຮັບຟັງບັນຫາຂອງຜູ້ອົບພະຍົກ ຫຼື ຜູ້ລີ້ໄພ. ສົນທະນາກັບຜູ້ຄົນທີ່ມາຈາກຖິ່ນຖານອື່ນເຊັ່ນກັນຈະຊ່ວຍເຮົາເຂົ້າໃຈທີ່ມາຂອງຕົນເອງຫຼາຍຂຶ້ນກວ່າເກົ່າ ແລະ ເພື່ອໃຫ້ຮູ້ເຖິງເອກະລັກຂອງຕົນເອງເລິກເຊິ່ງກວ່າເກົ່າ.
- ພວກເຮົາຕ້ອງໄດ້ໃສ່ໃຈນຳໂລກນີ້. ດາວເຄາະໜ່ວຍນີ້ແມ່ນບ້ານຂອງພວກເຮົາທີ່ໃຊ້ຮ່ວມກັນ. ໃຫ້ພວກເຮົາຮັກສາມັນໄວ້ເພື່ອຕ້ອນຮັບຄົນໃນຍຸກຕໍ່ໆໄປ. ມັນເປັນສິ່ງສຳຄັນຫຼາຍທີ່ພວກເຮົາຈະຕ້ອງໄດ້ເບິ່ງຄືນການດຳລົງຊີວິດຂອງເຮົາ, ຕ້ອງໄດ້ຮ່ວມກັນເຮັດທຸກຢ່າງເພື່ອຢຸດຕິການລ້າງຜານຊັບພະຍາກອນທຳມະຊາດ ແລະ ກຳຈັດທຸກໆຮູບແບບຂອງການກະທຳທີ່ກໍ່ໃຫ້ເກີດມົນລະພິດ ແລະ ປະຕິເສດຄວາມຫຼາກຫຼາຍທາງຊີວະວິທະຍາ. ຖ້າພວກເຮົາເປັນໜຶ່ງດຽວກັບຊັບພະສິ່ງໃນໂລກ, ພວກເຮົາຈະຄົ້ນພົບຄວາມຊື່ນຊົມຍິນດີທີ່ມີຊີວິດຈາກສິ່ງຕ່າງໆເຫຼົ່ານີ້.

**ພຣະເຢຊູເຈົ້າຊົງກ່າວວ່າ: "ເຮົາບອກພວກເຈົ້າດ້ວຍຄວາມຈິງວ່າ ເມື່ອພວກເຈົ້າໄດ້ເຮັດສິ່ງເຫຼົ່ານີ້ ແກ່ຜູ້ທີ່ຕໍ່າຕ້ອຍທີ່ສຸດຄົນໜຶ່ງໃນພວກພີ່ນ້ອງເຫຼົ່ານີ້ຂອງເຮົາ, ພວກເຈົ້າກໍ່ໄດ້ປະຕິບັດຕໍ່ເຮົາເຊັ່ນກັນ" (ມັດເທວ 25:40)**

**ພວກເຮົາຕ້ອງຊ່ວຍຜູ້ທີ່ອ່ອນແອ, ໂດຍໃຫ້ຄິດເຖິງຖ້ອຍຄຳຂອງພຣະເຢຊູເຈົ້າທີ່ວ່າ: "ການໃຫ້ເປັນເຫດໃຫ້ມີຄວາມສຸກຫຼາຍກວ່າການຮັບ" (ກິດຈະການ 20:35)**

*ເມື່ອໃດທີ່ຂ້າພະເຈົ້າໄດ້ມີປະສົບການການໃຫ້ທີ່ກໍ່ໃຫ້ເກີດຄວາມສຸກ?*

*ຂ້າພະເຈົ້າຮູ້ສຶກຕົວເອງບໍ່ວ່າຂ້າພະເຈົ້າກໍຕ້ອງການຮັບບາງສິ່ງບາງຢ່າງຈາກຄົນອື່ນເຊັ່ນກັນ?*